**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະຖານເອກະອັກຄະລັດຖະທູດແຫ່ງ ສປປ ລາວ ປະຈຳ ສສ ຫວຽດນາມ
ຫ້ອງການທີ່ປຶກສາຝ່າຍສຶກສາ-ວັດທະນະທຳ

ເລກທີ:0470 /ສຫລ.ສວ.21
ນະຄອນຫຼວງຮ່າໂນ້ຍ, ວັນທີ 27 ກັນຍາ 2021

# ແຈ້ງການ

ເຖິງ: ຄະນະນັກສຶກສາປະຈຳສະຖາບັນ, ມະຫາວິທະຍາໄລ ແລະ ວິທະຍາໄລ ທີ່ ສສ ຫວຽດນາມ.
ເລື່ອງ: ການແຈ້ງເຕືອນນັກສຶກສາລາວກ່ຽວກັບການຮຽນອອນລາຍ ແລະ ການປະຕິບັດລະບຽບຂອງສະຖານການສຶກສາໃນສົກຮຽນ 2021-2022.

- ອີງຕາມ ໜັງສືແຈ້ງຕອບ ສະບັບເລກທີ 3222/ຫກ, ລົງວັນທີ 22 ກັນຍາ 2021, ຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສປປ ລາວ;
- ອີງຕາມ ການຊີ້ນຳຂອງຄະນະນຳສະຖານເອກອັກຄະລັດຖະທູດລາວ ປະຈຳ ສສ ຫວຽດນາມຄັ້ງວັນທີ 23 ກັນຍາ 2021.

ຫ້ອງການທີ່ປຶກສາຝ່າຍສຶກສາ-ວັດທະນະທຳ, ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈຳ ສສ ຫວຽດນາມ ຂໍແຈ້ງມາຍັງ ບັນດາຄະນະຮັບຜິດຊອບນັກສຶກສາລາວ, ນັກສຶກສາ ແລະ ນັກຄົ້ນຄວ້າ ທີ່ກຳລັງສຶກສາຄົ້ນຄວ້າຮ່ຳຮຽນທີ່ ສສ ຫວຽດນາມ ຊາບວ່າ: ໃນສະພາບທີ່ມີການແຜ່ລະບາດຂອງພະຍາດ Covid-19 ໃນພາກພື້ນ ແລະ ແຜ່ຂະຫຍາຍເປັນວົງກວ້າງໃນບັນດາປະເທດຕ່າງໆໃນໂລກ ເວົ້າລວມ, ເວົ້າສະເພາະແມ່ນ ຢູ່ ສສ ຫວຽດນາມ ແລະ ສປປ ລາວ ໄດ້ມີການແຜ່ລະບາດໃນຊຸມຊົນເປັນບໍລິເວນກວ້າງຂວາງ ເຮັດໃຫ້ມີຫລາຍຂະແໜງການໄດ້ມີການປະຕິຮູບໃນການດຳເນີນງານເພື່ອໃຫ້ສອດຄ່ອງກັບສະພາບປັດຈຸບັນ ລວມທັງຂະແໜງການສຶກສາຈຳເປັນຕ້ອງໄດ້ປັບປຸງຮູບແບບການຮຽນ-ການສອນເພື່ອໃຫ້ແທດເໝາະກັບສະພາບການ ເຊິ່ງບັນດາສະຖາບັນການສຶກສາຂອງ ສສ ຫວຽດນາມ ໄດ້ອອກແຈ້ງການໃຫ້ນັກສຶກສາ ແລະ ນັກຄົ້ນຄວ້າຕ້ອງຮຽນຜ່ານດ້ວຍລະບົບອອນລາຍ, ສະນັ້ນ, ຫ້ອງການທີ່ປຶກສາຝ່າຍສຶກສາ-ວັດທະນະທຳ ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈຳ ສສ ຫວຽດນາມ ຈຶ່ງແຈ້ງທິດຊີ້ນຳຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສປປ ລາວ ໃຫ້ບັນດານັກສຶກສາ ແລະ ນັກຄົ້ນຄວ້າ ຊາບດັ່ງນີ້:

1. ເພື່ອເຮັດໃຫ້ການຮຽນ, ການຄົ້ນຄວ້າຂອງນັກສຶກສາ ແລະ ນັກຄົ້ນຄວ້າຂອງພວກເຮົາໄດ້ຮັບການສຶກສາຄົ້ນຄວ້າໃຫ້ມີຄຸນນະພາບສູງສຸດຈຶ່ງບໍ່ເຫັນດີໃຫ້ນັກສຶກສາ-ນັກຄົ້ນຄວ້າທີ່ກຳລັງສຶກສາ, ຄົ້ນຄວ້າຢູ່ສະຖາບັນຕ່າງໆ ຂອງ ສສ ຫວຽດນາມກັບຄືນໄປຮຽນຜ່ານລະບົບອອນລາຍຢູ່ລາວ.
2. ໃນສົກຮຽນ 2021-2022 ໃຫ້ນັກສຶກສາ ແລະ ນັກຄົ້ນຄວ້າລາວ ທຸກຄົນ ເອົາໃຈໃສ່ໃນການປະຕິບັດກົດລະບຽບຂອງປະເທດເຈົ້າພາບ ກໍຄືກົດລະບຽບຂອງສະຖາບັນການສຶກສາວາງອອກໃຫ້ເຂັ້ມງວດ, ເພີ່ມທະວີຄວາມຮັບຜິດຊອບໃນການສຶກສາຄົ້ນຄວ້າ, ມີສະຕິ ແລະ ເປັນເຈົ້າການໃນການຊອກຮູ້ຮ່ຳຮຽນ ເພື່ອຫຼີກເວັ້ນການຮຽນຄືນ ຫລື ສອບເສັງຄືນໃນທ້າຍພາກຮຽນ ແລະ ຮັບປະກັນໃຫ້ສຳເລັດການສຶກສາຕາມແຜນການຂອງສະຖາບັນໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ. EW

**ຫ້ອງການທີ່ປຶກສາຝ່າຍສຶກສາ-ວັດທະນະທຳ**

ສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ
ນະຄອນຫລວງຮ່າໂນ້ຍ

**ປອ. ຄຳພັນ ຄຳອ່ອນ**
**ທີ່ປຶກສາສຶກສາ-ວັດທະນະທຳ**

สแกนด้วย CamScanner